ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ເຈົ້າແຂວງ

ເລກທີ..09../ຈຂ

ເຊກອງ, ລົງວັນທີ..06.06.2016

# ຄຳສັ່ງແນະນຳ

## ກ່ຽວກັບ ການຜັນຂະຫຍາຍ,ຈັດຕັ້ງປະຕິບັດຄຳສັ່ງ ເລກທີ 15/ນຍ ລົງວັນທີ 13/5/2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.

**ເຖິງ:** ບັນດາທ່ານ ຫົວໜ້າພະແນກການອ້ອມຂ້າງແຂວງ, ສອງກຳລັງປະກອບອາວຸດ, ຫ້ອງການທຽບເທົ່າຂັ້ນແຂວງ ແລະ ທ່ານ ເຈົ້າເມືອງ 4 ຕົວເມືອງ.

**ເລື່ອງ:** ຜັນຂະຫຍາຍ ຈັດຕັ້ງປະຕິບັດ ຄຳສັ່ງ ເລກທີ 15/ນຍ,ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້, ທຸລະກິດໄມ້ ໃນຂອບເຂດທົ່ວແຂວງ.

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນສະບັບປັບປຸງ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ III ໝວດທີ 4 ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມ: ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 13 / 5 / 2016. ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.

ເພື່ອເປັນການເພີ່ມທະວີໃນການຈັດຕັ້ງປະຕິບັດ ຄຳສັ່ງ ເລກທີ 15/ນຍ, ລົງວັນທີ 13/05/2016, ກ່ຽວກັບ ວຽກງານຄຸ້ມຄອງປ່າໄມ້, ການດຳເນີນທຸລະກິດໄມ້, ການຂຸດຄົ້ນໄມ້, ປຸງແຕ່ງໄມ້, ຊື້ຂາຍໄມ້ ໃຫ້ມີຄວາມເຂັ້ມງວດຕາມກົດໝາຍ ແລະ ລະບຽບການຕ່າງໆ ທີ່ລັດຖະບານໄດ້ວາງອອກໃຫ້ມີຄວາມສັກສິດ, ທັງເປັນການຕ້ານ ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ດ້ານຕ່າງໆ ໃນຂົງເຂດວຽກງານປ່າໄມ້ໃຫ້ຫຼຸດລົງ ແລະ ໝົດໄປເທື່ອລະກ້າວ.

## ເຈົ້າແຂວງ-ແຂວງເຊກອງ ອອກຄຳສັ່ງ:

1. ໃຫ້ບັນດາພະແນກການອ້ອມຂ້າງແຂວງ, ສອງກຳລັງປະກອບອາວຸດ, ຫ້ອງການທຽບເທົ່າຂັ້ນແຂວງ, ຜູ້ປະກອບການດ້ານທຸລະກິດໄມ້ ແລະ 4 ຕົວ ເມືອງ ເພີ່ມທະວີຄວາມເປັນເຈົ້າການໃນການເອົາໃຈໃສ່, ຜັນຂະຫຍາຍ ຄຳສັ່ງ ເລກທີ 15/ນຍ, ລົງວັນທີ 13 / 5 / 2016 ເປັນຕົ້ນແມ່ນການຕິດຕາມ, ກວດກາ ຢ່າງເຂັ້ມງວດໃນການປະຕິບັດ ໜ້າທີ່, ຂອບເຂດ, ສິດ ແລະ ຄວາມຮັບຜິດຊອບໃຫ້ຖືກຕ້ອງຕາມລະບຽບກົດໝາຍຕ່າງໆ ທີ່ໄດ້ກຳນົດໄວ້ ໂດຍສະເພາະ

ແມ່ນ ກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າໄມ້, ການຂຸດຄົ້ນໄມ້, ການເຄື່ອນຍ້າຍ ແລະ ທຸລະກິດໄມ້ທຸກປະເພດ.

2. ໃຫ້ບັນດາພະແນກການອ້ອມຂ້າງແຂວງ; ຜູ້ປະກອບການ ແລະ ອຳນາດການປົກຄອງ 4 ຕົວເມືອງ ປະຕິບັດ ຄຳສັ່ງ ເລກທີ 15/ນຍ, ລົງວັນທີ 13 / 5 / 2016 ຢ່າງເຂັ້ມງວດເປັນຕົ້ນ: ໃຫ້ຢຸດຕິການສົ່ງອອກ, ເປັນຕົ້ນ ໄມ້ທ່ອນ, ໄມ້ຕັບ , ໄມ້ຕີຕັບ, ໄມ້ແປຮູບ, ໄມ້ຊອຍ, ຮາກໄມ້ ຫລື ເຫງົ້າໄມ້, ຕໍໄມ້, ປຸດໄມ້, ງ່າໄມ້ ແລະ ໄມ້ຢືນຕົ້ນ ຫຼື ໄມ້ປະດັບ ທີ່ຂຸດຄົ້ນອອກຈາກປ່າທຳມະຊາດ ໄປຕ່າງປະເທດ ໃນທຸກກໍລະນີຢ່າງເດັດຂາດລວມທັງໄມ້ທີ່ລັດຖະບານໄດ້ອະນຸມັດຜ່ານມາ ແຕ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດ: ແມ່ນໃຫ້ປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ ຕາມມາດຕະຖານທີ່ກະຊວງ ອຸດສາຫະກຳ ແລະ ການຄ້າວາງອອກ (ຕາມຂໍ້ຕົກລົງສະບັບເລກທີ 2005/ອຄ.ກອຫ, ລົງວັນທີ 28/9/2015) ແລ້ວຈິ່ງອະນຸຍາດໃຫ້ສົ່ງອອກ.

3. ໃຫ້ບັນດາພະແນກການອ້ອມຂ້າງແຂວງ; ຜູ້ປະກອບການ ແລະ ອຳນາດການປົກຄອງ 4 ຕົວເມືອງ. ປະຕິບັດຄື: ຫ້າມນຳໄມ້ ແລະ ເຄື່ອງປ່າຂອງດົງທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຈາກຕ່າງແຂວງມາຜ່ານເພື່ອສົ່ງໄປຕ່າງປະເທດ.

4. ໃຫ້ສືບຕໍ່ປະຕິບັດ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 31/ນຍ, ລົງວັນທີ 5 ພະຈິກ 2013, ວ່າດ້ວຍການຢຸດຕິຊົ່ວຄາວການຂຸດຄົ້ນໄມ້ຈາກເຂດປ່າຜະລິດ ແລະ ໃຫ້ສືບຕໍ່ແຜນຈັດສັນປ່າຜະລິດໃຫ້ສຳເລັດແລ້ວລາຍງານໃຫ້ອຳນາດການປົກຄອງແຂວງ ແລະ ກະຊວງ ເພື່ອພິຈາລະນາ.

4.1 ສຳລັບການຂຸດຄົ້ນໄມ້ອອກຈາກເຂດກໍ່ສ້າງພື້ນຖານໂຄງລ່າງເຊັ່ນ: ແລວບຸກເບີກກໍ່ສ້າງເສັ້ນທາງໃໝ່, ເຂດກໍ່ສ້າງເຄື່ອນໄຟຟ້າ, ເຂດທີ່ນ້ຳຈະຖ້ວມ, ເຂດຂຸດຄົ້ນແຮ່ທາດ ແລະ ອື່ນໆ ແມ່ນໃຫ້ມີການສຳຫຼວດຂຶ້ນບັນຊີຈຳນວນ ແລະ ບໍລິມາດໄມ້ໃຫ້ລະອຽດແລ້ວຈິ່ງສະເໜີລັດຖະບານພິຈາລະນາເພື່ອສັງລວມເຂົ້າແຜນຂຸດຄົ້ນໄມ້ປະຈຳປີແລ້ວສະເໜີສະພາແຫ່ງຊາດພິຈາລະນາ.

4.2 ກໍລະນີທີ່ໄດ້ຮັບອະນຸຍາດໃຫ້ຂຸດຄົ້ນແມ່ນຕ້ອງມີການຄຸ້ມຄອງ, ຕິດຕາມກວດກາ ການຕັດໄມ້ຢ່າງເຂັ້ມງວດເພື່ອຮັບປະກັນການຂຸດຄົ້ນໄມ້ໃຫ້ຖືກຕ້ອງຕາມຈຳນວນ, ບໍລິມາດໄມ້ ແລະ ຂອບເຂດທີ່ໄດ້ຮັບອະນຸຍາດ. ຖ້າຫາກມີການຂຸດຄົ້ນບໍ່ຖືກຕ້ອງຕາມຂອບເຂດທີ່ອະນຸຍາດ ແມ່ນໃຫ້ດຳເນີນການຍຶດ, ປັບໃໝພ້ອມທັງດຳເນີນຄະດີຕາມກົດໝາຍ.

4.3 ຫ້າມອະນຸຍາດໃຫ້ຜູ້ພັດທະນາໂຄງການ ຫຼື ຫົວໜ່ວຍຮັບເໝົາກໍ່ສ້າງພື້ນຖານໂຄງລ່າງຕ່າງໆ ເປັນຜູ້ດຳເນີນການຂຸດຄົ້ນໄມ້; ລັດເປັນຜູ້ຮັບຜິດຊອບໂດຍກົງໃນການຂຸດຄົ້ນ ແລະ ຂາຍໄມ້. ຫ້າມບໍ່ໃຫ້ເອົາໄມ້ຊຳລະໂຄງການພັດທະນາພື້ນຖານໂຄງລ່າງໂດຍກົງ ຫຼື ການເອົາໄມ້ມາໄລ່ລຽງກັບໂຄງການຊຶ່ງເຫັນວ່າຂັດແຍ່ງກັບລະບຽບການແມ່ນຫ້າມຈັດຕັ້ງປະຕິບັດຢ່າງເດັດຂາດ.

5. ໃນເຂດພັດທະນາກໍ່ສ້າງພື້ນຖານໂຄງລ່າງ, ເຂດຂຸດຄົ້ນແຮ່ທາດ ແລະ ເນື້ອທີ່ທຳການຜະລິດຕ່າງໆ ທີ່ແຂວງ ຫຼື ລັດຖະບານ ຍັງບໍ່ທັນໄດ້ອະນຸມັດ ແມ່ນຫ້າມບໍ່ໃຫ້ດຳເນີນການສຳຫລວດ ແລະ ຂຸດຄົ້ນໄມ້ຢ່າງເດັດຂາດ.

6. ໃຫ້ຢຸດຕິການສະເໜີ ແລະ ອະນຸຍາດເກັບກູ້, ທ້ອນໂຮມໄມ້ກິ່ງງ່າ, ໄມ້ທ່ອນສັ້ນ, ໄມ້ນອນຂອນຕາຍ ແລະ ບໍ່ອະຍາດໃຫ້ເອົາໄມ້ແກ້ໄຂແກ່ບຸກຄົນໃດໜຶ່ງເປັນອັນຂາດ.

7. ໃຫ້ພະແນກກະສິກຳ ແລະ ປ່າໄມ້ເປັນໃຈກາງສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກວດກາ ແລະ ເກັບຂໍ້ມູນລະອຽດ: ຈຳນວນ, ບໍລິມາດໄມ້ ແລະ ພັນທະຕ່າງໆ ທີ່ຍັງຄ້າງຊຶ່ງໄດ້ຮັບອະນຸຍາດຈາກແຂວງໃນໄລຍະຜ່ານມາ ເພື່ອມອບໃຫ້ຂະແໜງການທີ່ກ່ຽວຂ້ອງຈັດການປະມູນຂາຍ ໃຫ້ແກ່ສະມາຄົມປຸງແຕ່ງໄມ້ ແລະ ສະມາຄົມເຟີນີເຈີ້ ຫຼື ຜູ້ປະກອບການອື່ນໆ ເພື່ອນຳມາປຸງແຕ່ງເປັນຜະລິດຕະພັນສຳເລັດຮູບເພື່ອສົ່ງອອກ.

7.1 ສຳລັບໄມ້ທີ່ຂຸດຄົ້ນເກີນແຜນທີ່ແຂວງ ອະນຸມັດ ແມ່ນໃຫ້ຍຶດເປັນຂອງລັດ ແລ້ວດຳເນີນຄະດີຕໍ່ຜູ້ກະທຳຜິດຢ່າງເຂັ້ມງວດຕາມລະບຽບກົດໝາຍ.

7.2 ສ່ວນໄມ້ທີ່ຂຸດຄົ້ນໂດຍບໍ່ໄດຮັບອະນຸຍາດ, ຜິດຕໍ່ລະບຽບກົດໝາຍ ແລະ ຍັງຄ້າງຢູ່ສະໜາມ 1 ແມ່ນບໍ່ໃຫ້ເກັບກູ້ ຫຼື ທ້ອນໂຮມອີກ ເພາະຈະເປັນຊ່ອງວ່າງໃນການລັກລອບຕັດໄມ້ຕໍ່ໄປ.

໘. ການຂຸດຄົ້ນໄມ້ທີ່ເປັນແຫຼ່ງພະລັງງານເຊັ່ນ: ໄມ້ຟືນ, ໄມ້ເຮັດຖ່ານ, ໄມ້ເຮັດຫຼັກຮົ້ວ, ໄມ້ຄ້ຳແບບ ແມ່ນອະນຸຍາດໃຫ້ເອົາສະເພາະເນື້ອທີ່ຄຸ້ມຄອງຂອງປະຊາຊົນ ແລະ ປ່າຊົມໃຊ້ຂອງບ້ານ ທີ່ໄດ້ຜ່ານການມອບດິນມອບປ່າ ຫຼືເອົາຈາກເຂດກໍ່ສ້າງພື້ນຖານໂຄງລ່າງທີ່ໄດ້ຮັບອະນຸມັດຈາກແຂວງຊຶ່ງໄດ້ຜ່ານການສຳຫລວດຢ່າງລະອຽດ.

໙. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄ້ວາ ຮູບແບບວິທີການ ເພື່ອສົ່ງເສີມການລົງທຶນໃສ່ການຂຸດຄົ້ນໄມ້ ໂດຍນຳໃຊ້ທ່າແຮງຂອງພາກລັດ ແລະ ຜູ້ປະກອບການ ເພື່ອສ້າງໃຫ້ມີການຈັດຕັ້ງ ຫຼື ກອງຂຸດຄົ້ນໄມ້ທີ່ເປັນໜ່ວຍງານເຄື່ອນໄຫວແບບເປັນວິຊາຊີບ ເປັນປົກກະຕິຕໍ່ເນື່ອງ, ປະສົມປະສານໄປກັບການປົກປັກຮັກສາ, ບູລະນະປ່າໄມ້ ໂດຍຢູ່ພາຍໃຕ້ການຄຸ້ມຄອງຂອງອຳນາດການປົກຄອງແຂວງ.

10. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ເປັນໃຈກາງໃນການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຮີບຮ້ອນດັດສົມໂຮງງານປຸງແຕ່ງໄມ້ ໃຫ້ສຳເລັດໂດຍໄວ. ພ້ອມດຽວກັນນັ້ນ ກໍ່ໃຫ້ຊີ້ນຳສະມາຄົມອຸດສາຫະກຳປຸງແຕ່ງໄມ້ ແລະ ສະມາຄົມເຟີນີເຈີ້ ປັບປຸງພາລະບົດບາດ ແລະ ກົນໄກການເຄື່ອນໄຫວ ວຽກງານຂອງຕົນ ໃຫ້ມີຄວາມເຂັ້ມແຂງ ເພື່ອປະຕິບັດນະໂຍບາຍສົ່ງເສີມການປຸງແຕ່ງໄມ້ຢູ່ພາຍໃນ ໃຫ້ສາມາດສ້າງມູນຄ່າເພີ່ມ ແລະ ມີຄຸນນະພາບ ຕາມຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ.

11. ໃຫ້ພະແນກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ສົມທົບກັບ ກອງບັນຊາການທະຫານແຂວງ ແລະ ຂະແໜງການ ອື່ນໆທີ່ກ່ຽວຂ້ອງຈັດເພີ່ມກຳລັງເຂົ້າຕື່ມ. ກວດກາລາດຕະເວນຕາມເຂດລຽບຊາຍແດນທີ່ຫຼໍ່ແຫຼມ, ມີການລັກຂຸດຄົ້ນໄມ້, ສະຖານທີ່ຂຸດຄົ້ນໄມ້, ເສັ້ນທາງຂົນສົ່ງໄມ້, ສະໜາມໄມ້, ໂຮງເລື່ອຍ, ໂຮງງານປຸງແຕ່ງໄມ້, ໂຮງງານເຟີນີເຈີ້, ສາງເກັບມ້ຽນໄມ້, ໂຮງງານທີ່ນຳໃຊ້ໄມ້ເປັນພະລັງງານ ແລະ ສະຖານທີ່ກ່ຽວຂ້ອງ ອື່ນໆ ຕາມການລາຍງານມາແລ້ວ. ຖ້າມີການລະເມີດ ຫຼື ກະທຳຜິດ ແມ່ນໃຫ້ດຳເນີນການສືບສວນ-ສອບສວນ ເພື່ອມີມາດຕາການທາງແພ່ງ ແລະ ທາງອາຍາ; ໃນກໍລະນີຮ້າຍແຮງ ແມ່ນໃຫ້ປະກອບສຳນວນຄະດີສົ່ງຟ້ອງໄອຍະການເພື່ອສົ່ງຟ້ອງຂຶ້ນສານ. ພ້ອມດຽວກັນນັ້ນ ກໍ່ໃຫ້ດຳເນີນການກວດກາ ການນຳເຂົ້າ, ການຊື້-ຂາຍ, ການມີໄວ້ຄອບຄອງ ແລະ ການນຳໃຊ້ເຄື່ອງມືອຸປະກອນ, ເຄື່ອງຈັກ ແລະ ພາຫະນະຂຸດຄົ້ນໄມ້ທີ່ບໍ່ໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງ, ຖ້າມີການຊຸກເຊື່ອງເພື່ອລັກລອບນຳໃຊ້ແມ່ນໃຫ້ຍຶດໄວ້ແລ້ວດຳເນີນຄະດີຕໍ່ຜູ້ກະທຳຜິດຕາມລະບຽບກົດໝາຍຢ່າງເຂັ້ມງວດ.

12. ໃຫ້ພະແນກກະສິກຳ ແລະ ປ່າໄມ້, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກອຸດສາຫະກຳ ແລະ ການຄ້າ ແລະ ພະແນກການເງິນ ເອົາໃຈໃສ່ປັບປຸງໜ່ວຍງານ ແລະ ບຸກຄະລາກອນຂອງຕົນທີ່ຮັບຜິດຊອບວຽກງານປ່າໄມ້ ແລະ ທຸລະກິດໄມ້ ໂດຍໃຫ້ປະຕິບັດການປະສານສົມທົບຢ່າງກົມກຽວ, ປະຕິບັດຢ່າງຈິງຈັງ, ເຂັ້ມງວດ ແລະ ມີຄວາມໂປ່ງໃສ; ເດັດດ່ຽວປົກປ້ອງສົ່ງເສີມຜູ້ດີ ມີຄວາມສັດຊື່ ແລະ ມີຄວາມສາມາດ. ພ້ອມກັນນັ້ນ ກໍ່ເຂັ້ມງວດຕໍ່ບຸກຄົນບໍ່ດີ ທີ່ມີການສົມຮູ້ຮ່ວມຄິດສວຍໂອກາດຫາຜົນປະໂຫຍດໃຫ້ແກ່ຕົນ ແລະ ຝ່າຝືນລະບຽບກົດໝາຍຢ່າງເຂັ້ມງວດ.

13. ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການສົມທົບກັບ ກອງບັນຊາການ ປກສ ແຂວງ, ກອງບັນຊາການທະຫານແຂວງ, ພະແນກກະສິກຳ ແລະ ປ່າໄມ້ ເພີ່ມທະວີການເຝົ້າລະວັງ ແລະ ປ້ອງກັນເວນຍາມ ບໍ່ໃຫ້ມີການລັກລອບຂຸດຄົ້ນໄມ້ໃນເຂດປ່າປ້ອງກັນ, ປ່າສະຫງວນແຫ່ງຊາດ ແລະ ປ່າປ້ອງກັນຂອງແຂວງ - ເມືອງ ກໍລະນີພົບເຫັນປະກົດການລັກລອບຕັດໄມ້ໃນເຂດດັ່ງກ່າວຕ້ອງໃຊ້ມາດຕາການເດັດຂາດ ແລະ ເຂັ້ມງວດຕໍ່ຜູ້ກະທຳຜິດ.

14. ໃຫ້ທ່ານເຈົ້າເມືອງ 4 ຕົວເມືອງ ແລະ ເຈົ້າໜ້າທີ່ກ່ຽວຂ້ອງນຳໃຊ້ມາດຕະການເດັດຂາດຕໍ່ການລັກລອບຂຸດຄົ້ນໄມ້, ຊື້-ຂາຍໄມ້ແບບບໍ່ຖືກຕ້ອງໃນຂອບເຂດຄວາມຮັບຜິດຊອບຂອງຕົນ. ໃນນີ້ ໃຫ້ເລັ່ງໃສ່ເຄື່ອນໄຫວເກັບກຳຂໍ້ມູນ ແຫລ່ງຂ່າວຕ່າງໆໃນຈຸດຫລໍ່ແຫລມຂອງເມືອງ ຖ້າຫາກມີແຫລ່ງຂ່າວການລັກລອບ ຄະນະກຳມະການຂັ້ນເມືອງຕ້ອງໄປຮອດ,ໄປເຖິງຈຸດໂດຍດ່ວນ ຖ້າພົບເຫັນໄມ້ຖືກລັກລອບ,ພົບຄົນ ແລະ ອຸປະກອນທີ່ນຳໃຊ້ເຂົ້າໃນການລັກລອບເປັນຕົ້ນ: ລົດໄຖນາທີ່ຕົບແຕ່ງ, ລົດຊີ້ງ, ລົດສະແລວ,ຈັກສະຕິນ ແລະ ພາຫານະອື່ນໆທີ່ໃຊ້ເຂົ້າໃນການລັກລອບ ແມ່ນໃຫ້ນຳໃຊ້ມາດຕະການກັກ, ຍຶດ ໃນທັນທີ ແລ້ວດຳເນີນຄະດີ ຕາມລະບຽບກົດໝາຍຢ່າງເຂັ້ມງວດ.

15. ຫ້າມພະນັກງານ; ທະຫານ ແລະ ເຈົ້າໜ້າທີ່ຊຶ່ງປະຈຳການຢູ່ບັນດາດ່ານສາກົນ, ດ່ານທ້ອງຖິ່ນ, ດ່ານປະເພນີ ແລະ ເຮັດໜ້າທີ່ຢູ່ຕາມເຂດຊາຍແດນ ອະນຸຍາດ ຫຼື ອຳນວຍຄວາມສະດວກ ໃນການສົ່ງອອກໄມ້ ແລະ ເຄື່ອງປ່າຂອງດົງ ທີ່ໄດ້ລະບຸໄວ້ໃນຂໍ້ 2 ແລະ ຂໍ້ 3 ຂອງຄຳສັ່ງສະບັບນີ້ຢ່າງເດັດຂາດ.

**16.** ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ, ຂະແໜງການກ່ຽວຂ້ອງຕ່າງໆ ຮັບຜິດຊອບຕິດຕາມກວດກາການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານໃຫ້ຂັ້ນເທິງຊາບແຕ່ລະໄລຍະເພື່ອແກ້ໄຂບັນຫາຕ່າງໆ ທີ່ອາດເກີດຂຶ້ນໃຫ້ທັນສະພາບການ.

**17.** ໃຫ້ບັນດາຫົວໜ້າພະແນກການທັງໝົດ, ອົງການທຽບເທົ່າພະແນກ, ທ່ານ ເຈົ້າເມືອງ 4 ຕົວເມືອງ ໃນທົ່ວແຂວງ ຄົ້ນຄ້ວາກຳແໜ້ນ ຄຳສັ່ງສະບັບນີ້ ພ້ອມທັງຜັນຂະຫຍາຍອອກເປັນໜ້າວຽກລະອຽດ ຕາມຄວາມຮັບຜິດຊອບຂອງຕົນໂດຍໄວ ແລະ ຈັດຕັ້ງໃຫ້ມີປະສິດທິຜົນ ກໍລະນີພະແນກການໃດ, ເມືອງໃດ ຫາກລະເມີດຕໍ່ຄຳສັ່ງສະບັບນີ້ ແມ່ນຄະນະນຳຂອງພະແນກການນັ້ນ ຫຼື ອຳນາດການປົກຄອງນັ້ນ ຕ້ອງຮັບຜິດຊອບຕໍ່ລະບຽບກົດໝາຍ.

**18.** ມອບໃຫ້ພະແນກການອ້ອມຂ້າງແຂວງ ແລະ 4 ຕົວເມືອງ ຈັດຕັ້ງເຜີຍແຜ່ ຄຳສັ່ງ ເລກທີ 15/ນຍ ແລະ ຄຳສັ່ງສະບັບນີ້ ໃຫ້ແກ່ພະນັກງານວິຊາການ ຂອງຂະແໜງການຕົນ ເພື່ອຄວາມເປັນເອກະພາບ ແລະ ພ້ອມກັນຈັດຕັ້ງຜັນຂະຫຍາຍ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ. ພາຍຫຼັງມີການເຊື່ອມຊຶມແລ້ວ ໃຫ້ມີການສ່ອງແສງລາຍງານຂັ້ນເທິງເພື່ອຮັບຊາບ.

**19.** ບັນດາຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ ແລະ ນິຕິກຳຕ່າງໆ ທີ່ອຳນາດການປົກຄອງແຂວງໄດ້ອອກຜ່ານມາຊຶ່ງມີເນື້ອໃນຂັດກັບຄຳສັ່ງສະບັບນີ້ລ້ວນແຕ່ຖືກລົບລ້າງ.

ດັ່ງນັ້ນ, ຈຶ່ງໃຫ້ທຸກພາກສ່ວນ ຈົ່ງພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

**ເຈົ້າແຂວງ-ແຂວງເຊກອງ**

**ຜູ້ປະຈຳການ**

ເລັກໄຫລ ສີວິໄລ

<u>ບ່ອນສົ່ງ:</u>

| | |
|---|---|
| -ບັນດາພະແນກການອ້ອມຂ້າງ | 1 ສະບັບ. |
| -ສອງກຳລັງປະກອບອາວຸດ | 1 ສະບັບ. |
| -ຫ້ອງການທຽບເທົ່າຂັ້ນແຂວງ | 1 ສະບັບ. |
| -ເມືອງ 4 ຕົວເມືອງ | 1 ສະບັບ. |
| -ສຳເນົາ | 1 ສະບັບ. |